ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)

0491
ເລກທີ ........../ທລຍ

ນະຄອນຫລວງວຽງຈັນ, ວັນທີ 20 ກໍລະກົດ 2022

# ໜັງສືເຊີນເຂົ້າຮ່ວມປະມູນສົມທຽບລາຄາ

ຈັດພິມປຶ້ມບັນຊີ ແລະ ການຄຸ້ມຄອງກອງທຶນ ກຊກ ບ້ານ

ສັນຍາເລກທີ: PRF.III-AF/Record-Books/G-S/2022 (AF-G,029)

ເຖິງ: ______________________________

1. ລັດຖະບານ ສປປ ລາວ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA) ຂອງທະນາຄານໂລກ ເພື່ອຈັດຕັ້ງປະຕິບັດໂຄງການກອງທຶນຫລຸດຜ່ອນຄວາມ ທຸກຍາກ III - ໄລຍະທຶນເພີ່ມ ແລະ ມີຈຸດປະສົງທີ່ຈະນາໃຊ້ທຶນສ່ວນໜຶ່ງ ເຂົ້າໃນການຈັດພິມຈັດພິມປຶ້ມບັນຊີ ແລະ ການຄຸ້ມຄອງກອງທຶນ ກຊກ ບ້ານ, ດ້ວຍການສະເໜີໃຫ້ຍື່ນຊອງປະມູນເພື່ອສົມທຽບລາຄາ.

2. ກອງທຶນຫລຸດຜ່ອນຄວາມທຸກຍາກ ຂໍເຊີນໂຮງພິມຂອງທ່ານ ເຂົ້າຍື່ນຊອງສົມທຽບລາຄາ ສຳລັບການຈັດພິມປຶ້ມດັ່ງກ່າວຂ້າງເທິງ, ໄລຍະເວລາໃນການສົ່ງມອບແມ່ນ 45 ວັນ. ຕາຕະລາງລາຍການລະອຽດຂອງສິ່ງພິມມີດັ່ງລຸ່ມນີ້:

| ລ/ດ | ລາຍການສິ່ງພິມ | ຫົວໜ່ວຍ | ຈຳນວນ | ກຳນົດຈັດສົ່ງ | ສະຖານທີ່ຈັດສົ່ງ |
|---|---|---|---|---|---|
| 1 | ປຶ້ມຕິດຕາມເງິນຝາກ-ປ່ອຍກູ້ ປະຈຳຕົວສະມາຊິກ | ຫົວ | 25.030 (50 ໜ້າ) | 45 ວັນ | ຫ້ອງການ ທລຍ ເມືອງ ຕາມແຜນແບ່ງປັນ (4 ເມືອງ-ຜົ້ງສາລີ, 1 ເມືອງ - ອຸດົມໄຊ, 3 ເມືອງ-ຫົວພັນ, ແລະ 2 ເມືອງ-ຊຽງຂວາງ) |
| 2 | ປຶ້ມບັນທຶກກອງປະຊຸມ ກຊກ | ຫົວ | 530 (203 ໜ້າ) | | |
| 3 | ປຶ້ມບັນຊີຕິດຕາມເງິນສົດ ກອງທຶນ ກຊກ | ຫົວ | 530 (120 ໜ້າ) | | |
| 4 | ປຶ້ມບັນຊີຕິດຕາມເງິນຝາກ ກອງທຶນ ກຊກ | ຫົວ | 530 (100 ໜ້າ) | | |
| 5 | ປຶ້ມບັນຊີເງິນສົດ ແລະ ແຍກປະເພດ ກອງທຶນ ກຊກ | ຫົວ | 530 (101 ໜ້າ) | | |
| 6 | ປຶ້ມບັນຊີຕິດຕາມ ການປ່ອຍກູ້/ເກັບກູ້ທຶນຄືນ ກອງທຶນ ກຊກ | ຫົວ | 530 (100 ໜ້າ) | | |
| 7 | ປຶ້ມບັນທຶກກອງປະຊຸມ ຄບກ | ຫົວ | 530 (209 ໜ້າ) | | |
| 8 | ປຶ້ມສັນຍາກູ້ຢືມເງິນ ກອທຶນ ກຊກ | ຫົວ | 530 (200 ໜ້າ) | | |

3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 0047/ກງ, ລົງວັນທີ 13 ກຸມພາ 2019.

4. ຊອງສະເໜີລາຄາ ຈະຕ້ອງສົ່ງກ່ອນເວລາ 10:00 ໂມງ ຂອງວັນທີ 5/08/2022 ຢູ່ທີ່ຫ້ອງການກອງທຶນຫລຸດຜ່ອນຄວາມທຸກຍາກ, ແລະ ຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 10:00 ໂມງ, ຂອງວັນທີ 5/08/2022 ຢູ່ທີ່ຫ້ອງການ ທລຍ ຕັ້ງຢູ່ໃນຫ້ອງການລັດຖະບານ, ຖະໜົນ ສີສະຫວາດ, ບ້ານ ນາໄຮ່ດຽວ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ.
5. ທ່ານສາມາດສອບຖາມຂໍ້ມູນເພີ່ມເຕີມ ໄດ້ທີ່ຫ້ອງການ ທລຍ, ຕາມວັນ ແລະ ເວລາເຮັດວຽກ ໂທ: 261479-80 (ຕໍ່ 105).

ກອງທຶນຫລຸດຜ່ອນຄວາມທຸກຍາກ,

ຜູ້ອຳນວຍການ ທລຍ

ພັດນະຄອນ ຄັນທະມີໄຊ